ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**
*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**
**ເລກທີ ໔໗໐/ປພຖຊ/໑໐໑໐໐໙**

# ບົດຄວາມ

## ຄວາມບໍ່ຈິງໃຈຂອງພັກຣັດ ຖືກເປີດເຜີຍ.

ຄວາມບໍ່ຈິງໃຈຂອງພັກຣັດ ຕໍ່ຄົນເຊື້ອຊາດລາວ ໃນຕ່າງປະເທດ ຖືກເປີດເຜີຍ ເມື່ອສະຖານີວິທະຍຸ sbs, Australia ພາກພາສາລາວ ໄດ້ສຳພາດ ທ້າວ ເອນຕານີ ສະກຸນທອງ ໃນວັນທີ 2 ຕຸລາ 2009 ທີ່ຖືກພັກຣັດປະຕິເສດ ບໍ່ໃຫ້ເຂົ້າຮ່ວມແຂ່ງຂັນເຕະບານ ໃນ ຊີເກມ ຄັ້ງທີ 25 ທີ່ລາວເປັນເຈົ້າພາບນີ້, ຍ້ອນເປັນຄົນສອງສັນຊາດ.

ກ່ຽວກັບບັນຫານີ້, ພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ໄດ້ອອກຖະແລງການ ຕອບໂຕ້ນະໂຍບາຍຮຽກຮ້ອງເອົາຄົນລາວ ຢູ່ຕ່າງປະເທດມາກ່ອນແລ້ວ ວ່າ "ນະໂຍບາຍນີ້ບໍ່ມີຄວາມຈິງໃຈ, ຊ້ອນເຊື່ອງຄວາມເປັນຜເດັດການ, ຕົວະຍົວະເອົາຄົນລາວຕ່າງປະເທດ ເຂົ້າມາດັບງຽບເທົ່ານັ້ນເອງ! ຍັງໂຊກດີ, ທີ່ທ້າວ ເອນຕານີ ສະກຸນທອງ ໄດ້ໃຫ້ສຳພາດ ວິທະຍຸກະຈາຍສຽງ sbs, Australia ເປີດໃບໜ້າ ຕົວະຍົວະຫລອກລວງ ຂອງພັກຣັດ... ແຕ່ຍັງມີອີກຫລາຍຮ້ອຍຫລາຍພັນຄົນທີ່ຖືກພັກຣັດຕົວະຕົ້ມ, ແຕ່ບໍ່ມີໂອກາດ ໄດ້ຖະແລງຂ່າວ ໃຫ້ຄົນລາວຕ່າງສັນຊາດ ໃນທົ່ວໂລກໄດ້ຮູ້ນຳ.

ທ້າວ ເອນຕານີ ສະກຸນທອງ ເປັນລູກຫລານຂອງຄົນລາວຕ່າງສັນຊາດ ຢູ່ສະຫະຣັດອະເມຣິກາ ເຂົ້າມາເຕະບານ ຢູ່ທີມຊາດລາວ; ລົງຝຶກຊ້ອມ ມາແຕ່ເດືອນມິຖຸນາ, ທາງການລາວ ໄດ້ເຮັດໜັງສື Pass-port lao ໃຫ້; ເຄີຍໄດ້ໄປເຕະຢູ່ປະເທດໄທຍ, ຢູ່ວຽດນາມ ແລະຢູ່ຈຳປາສັກ ພາກໃຕ້ຂອງລາວມາແລ້ວ.

ທ້າວ ເອນຕານີ ເປັນນັກເຕະບານເກັ່ງຫລາຍ; ເຕະເຂົ້າເປົ້າໝາຍໄດ້ດີ, ຈຶ່ງໄດ້ຮັບການຍົກຍ້ອງ ແລະ ສນັບສນູນ ຈາກໜັງສືພິມທ້ອງຖິ່ນນັ້ນໆ ເປັນຢ່າງດີ.

ຕົກມາຮອດວັນທີ 28/9/09 ນີ້, ເອນຕານີ ຕ້ອງໄດ້ຫອບເຄື່ອງ ກັບບ້ານເຮືອນ ທີ່ສະຫະຣັດ,ໂດຍທີ່ພັກຣັດ ບອກໃຫ້ ເອນຕານີ ຮູ້ລ່ວງໜ້າ ພຽງແຕ່ວັນດຽວເທົ່ານັ້ນ! ວ່າ "ພັກຣັດບໍ່ໃຫ້ເຂົ້າເຂ່ງຂັນ ໃນງານ ຊີເກມ, ເພາະເປັນລູກຫລານຂອງຄົນເຊື້ອຊາດລາວ ຢູ່ໃນຕ່າງປະເທດ.

ທ້າວ ເອນຕານີ, ເປັນຄົນເກີດໃໝ່ໃຫຍ່ລຸນ; ຍັງຮຽນຢູ່ ມະຫາວິທຍາລັຍ ປີທີສອງ. -ເຂົາບໍ່ຮູ້ຈັກສົງຄາມ... ເຂົາບໍ່ຮູ້ຈັກການຂ້າຟັນລັນແທງກັນ ແບບໂຫດຮ້າຍປ່າເຖື່ອນ ແລະ ເຂົາບໍ່ຮູ້ຈັກ ການຄຽດແຄ້ນ ກຽດຊັງກັນ. -ເຂົາຮູ້ຈັກແຕ່ ໃຫ້ການຊ່ວຍເຫລືອຊຶ່ງກັນແລະກັນ. ເຂົາຮູ້ຈັກແຕ່ ຂໍອະພັຍະໂທດໃນເມື່ອ ຕົນໄດ້ກະທຳຜິດ ແລະເຂົາມີຄວາມກ້າຫານ ປະກອບສ່ວນໃນວຽກງານ ອັນໃດທີ່ ເຫັນວ່າ ເປັນການເຊີດໜ້າຊູຕາປະເທດຊາດ.... ແຕ່ເມື່ອຖືກພັກຣັດກັ່ນແກ້ງ, ຕົວະຍົວະຫລອກໃຊ້, ເຮັດໃຫ້ເສັຽເວລາ, ເສັຽຄວາມຕັ້ງໃຈຄືດັ່ງນີ້, ທ້າວ ເອນຕານີ ມີຄວາມເສັຽໃຈຫລາຍທີ່ສຸດ!... ດັ່ງບາງຕອນ ຂອງຂໍ້ສຳພາດດັ່ງນີ້: -ນັກຂ່າວໄດ້ຖາມວ່າ **"ເຈົ້າເສັຽໃຈບໍ?"** -ເອນຕານີ ຕອບ: **"ຂ້ອຍເສັຽໃຈຫລາຍ!"**. ຖາມ: **ເຈົ້າເຕະເກັ່ງບໍ?**

ຕອບ: **"ເຕະເກັ່ງຫລາຍ"**. ຖາມ: **ເປັນຫຍັງ ເພິ່ນຈຶ່ງບໍ່ໃຫ້ເຈົ້າເຕະ?** ຕອບ: **"ຍ້ອນມີສອງສັນຊາດ"**. ຖາມ: **ບໍ່ແມ່ນໝູ່ໃນທີມ ປະທ້ວງບໍ?** ຕອບ: **ແມ່ນແທ້! ພວກເຕະຢູ່ທີມ ມີແຕ່ຄົນ ຂອງອາຈາຣ.. ເຕະມາ ດົນແລ້ວ. ເຂົາບໍ່ຕ້ອງການຄົນໃໝ່...ເຕະເກັ່ງປານໃດກໍຕາມ.**

ປະກົດການອັນນີ້, ພາໃຫ້ຄົນລາວຕ່າງປະເທດ ໃນທົ່ວໂລກ ໄດ້ພາກັນທົບທວນຄືນ ຄຳເວົ້າຂອງຜູ້ນຳປະເທດ ວ່າ ມີຄວາມຈິງນ້ອຍຫລາຍພຽງໃດ?

**-ທ່ານ ຈູມມະລີ ໄຊຍະສອນ ປະທານປະເທດ ໄດ້ເວົ້າ ໃນເວລາໂອ້ລົມກັບນັກສຶກສາ (ຂ່າວຈາກ Youtube) ວ່າ "ພັກຣັດ ຕ້ອງການພວກລູກຫລານກັບຄືນ ເມືອສ້າງສາພັທນາປະເທດຊາດ ແລະ ທ່ານ ຫຽມ ພົມມະຈັນ ຣັຖມົນຕຣີຊ່ວຍວ່າການຕ່າງປະເທດ ໃຫ້ສຳພາດ ວິທະຍຸ ຝຣັ່ງສາກົນ ວ່າ ນະໂຍບາຍ ຂອງ ຣັຖບານ ມີຕໍ່ຄົນເຊື້ອຊາດລາວ ໃນຕ່າງປະເທດນີ້, ຄືວ່າ ປະເທດລາວ ເປັນຂອງຄົນລາວເຮົາ, ຄົນລາວ ຢູ່ຕ່າງປະເທດ ກໍມີສິດເປັນເຈົ້າຄືກັນ; ເປັນເຈົ້າໃນລັກສນະວ່າ ຕົນເອງໃນຕ່າງປະເທດ, ຈະເຮັດແນວໃດ ໃຫ້ແກ່ປະເທດຊາດ. ເຮົາຕ້ອງເອົາຜົນປໂຍດຂອງຊາດເປັນຫລັກ"**. ຄຳເວົ້າ ທີ່ກ່າວມາ ຂ້າງເທິງນີ້, ມັນເປັນເລື້ອງຕົວະຍົວະຫລອກລວງເທົ່ານັ້ນເອງ!.

ການຕົວະຍົວະຫລອກໃຊ້ ທ້າວ ເອນຕານີ ນີ້, ໃຫ້ຄົນລາວ ໃນຕ່າງປະເທດ ແລະລູກຫລານ ຜູ້ເກີດໃໝ່ໃຫຍ່ລຸນ ໄດ້ເຂົ້າໃຈ ເຖິງທາດແທ້ ຂອງອຳນາດຜເດັດການ ວ່າ "ພວກເຂົາ ບໍ່ໄດ້ຕ້ອງການຄົນລາວຢູ່ຕ່າງປະເທດແຕ່ຢ່າງໃດເລີຍ, ເຖິງຈະເປັນຄົນດີມີສິລທັມ, ເຖິງຈະເປັນຄົນເກັ່ງທາງ ດ້ານວິຊາການຫລາຍປານໃດກໍຕາມ... ຢ່າໄດ້ຫລົງເຊື່ອຄຳໂຄສະນາຂອງພວກເຂົາເປັນເດັດຂາດ, ຕາບໃດ ທີ່ ຍັງເປັນຜເດັດການພັກດຽວຢູ່...ຕາບນັ້ນ! ຜູ້ໃດຫລົງເຊື່ອ, ກໍຈະຕ້ອງໄດ້ຮັບຄວາມເຈັບຊ້ຳຢູ່ຕລອດໄປ.

ພວກເຮົາປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ເຫັນວ່າ "ເມື່ອພັກຣັດ ສປປລາວ. ມີເຈຕນາກັ່ນແກ້ງ, ຕົວະຍົວະຫລອກໃຊ້ ທ້າວ ແອນຕານີ ສະກຸນທອງ ທີ່ຍັງຢູ່ໃນວັຍຮຽນດັ່ງນີ້, ມັນເປັນການກະທຳ ທີ່ຂັດຕໍ່ຫລັກການສາກົນ ໃນການສົ່ງເສີມເຍົາວະຊົນ ໃຫ້ໄດ້ ຮັບການສຶກສາອົບຣົມທີ່ດີ ເພື່ອຈະໄດ້ເປັນພົລເມືອງດີຂອງຊາດ. ສັ້ນນາຂໍໃຫ້ອົງການ UNESCO, UNICEF ແລະ ອົງການຈັດຕັ້ງສາກົນອື່ນໆ ຢູ່ໃນລາວ, ຈົ່ງໄດ້ຕັກເຕືອນ ແລະບີບຣັດ ໃຫ້ພັກຣັດ ສປປລາວ. ຢຸດຕິການກະທຳ ທີ່ໄຮ້ມະນຸສທັມ ຕໍ່ເຍົາວະຊົນຊັ່ນນີ້ ອີກຕໍ່ໄປ.

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໑໐ ຕຸລາ ໒໐໐໗.**